ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສໍານັກງານໃຫຍ່

ເລກທີ: 039 /ທຄຕລ 2020
ນະຄອນຫຼວງວຽງຈັນ, ວັນທີ: 01 APR 2020

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ຫ້າງຮ້ານຕົວແທນຈໍາໜ່າຍ Cassette ຂອງ ຕູ້ເອທີເອັມ ຢູ່ໃນນະຄອນຫລວງວຽງຈັນ.

**ເລື່ອງ** : ແຈ້ງເຊີນເຂົ້າຮ່ວມການປະເມີນລາຄາ Cassette ຂອງ ຕູ້ເອທີເອັມ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງເຊີນມາຍັງບໍລິສັດ, ຫ້າງຮ້ານ ຕົວແທນຈໍາໜ່າຍກະແຊັດສໍາຮອງສໍາລັບຕູ້ ATM (S1 Cassette) ຊາບວ່າ ທຄຕລ ມີຄວາມຕ້ອງການຈັດຊື້ກະແຊັດສໍາຮອງສໍາລັບຕູ້ ATM (S1 Cassette) ເພື່ອມາຮັບໃຊ້ເຂົ້າໃນລະບົບວຽກງານວິຊາສະເພາະຂອງ ທຄຕລ ດັ່ງມີລາຍການຂ້າງລຸ່ມນີ້:

| ລ/ດ | ລາຍການ | ລາຍລະອຽດສະເປັກ | ຈໍານວນ |
|---|---|---|---|
| 1 | Cassette | - S1 Cassette | 160 ອັນ |

**I. ເງື່ອນໄຂຂອງບໍລິສັດ,ຫ້າງຮ້ານຕົວແທນຈໍາໜ່າຍມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້.**

1. **ຊອງເອກະສານປະກອບມີ:**
   - ໃບທະບຽນວິສາຫະກິດ, ໃບຢັ້ງຢືນການມອບພັນທະອາກອນປີປະຈຸບັນ, ໃບຢັ້ງຢືນເປັນຕົວແທນຈໍາໜ່າຍ, ປະເທດທີ່ຜະລິດອຸປະກອນ ຫຼື ມີເອກະສານທີ່ກ່ຽວຂ້ອງ, ລະບຸໄລຍະເວລາໃນການຮັບປະກັນ, ຜົນງານຜ່ານມາທີ່ເຄີຍສະໜອງເຄື່ອງດັ່ງກ່າວໃຫ້ພາກສ່ວນອື່ນ, ມີປະສົບການຜົນງານ 02 ປີ ຂຶ້ນໄປ ແລະ ມີວິຊາການບໍລິການຫຼັງການຂາຍ.

2. **ຊອງໃບສະເໜີລາຄາ** (ຕ້ອງເປັນສະກຸນເງິນກີບລວມອາກອນ).
   - ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍລາຍການ ແລະ ລວມມູນຄ່າທັງໝົດໃຫ້ຄົບຖ້ວນ.
   - ຍື່ນເອກະສານສະເໜີລາຄາ ແລະ ລາຍລະອຽດຂອງກະແຊັດ ມາຍັງພະແນກຫ້ອງການບໍລິຫານ - ການເງິນ ທຄຕລ ສໍານັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານC. ໃນວັນທີ 24/04/2020 ແລະ ຈະປິດການຮັບຊອງເວລາ 09:00 ໂມງ ຂອງວັນດຽວກັນ.

**II. ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ທີ່ຊະນະການປະມູນ, ການຊໍາລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

ງວດທີ 1: ຊໍາລະ 90% ຂອງມູນຄ່າ ພາຍຫລັງໄດ້ຮັບເຄື່ອງ ແລະ ຕິດຕັ້ງເຄື່ອງສໍາເລັດ.

ງວດທີ 2: ຊໍາລະ 10% ຂອງມູນຄ່າທັງໝົດພາຍຫຼັງຄົບກໍານົດຄໍ້າປະກັນ (ໄລຍະ 06 ເດືອນ) ນັບຕັ້ງແຕ່ວັນທີມອບຮັບເຄື່ອງ.

❖ **<u>ໝາຍເຫດ:</u>**

1. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄໍ້າປະກັນການປະຕິບັດສັນຍາຕາມກໍານົດ, ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ (ເຈົ້າຂອງໂຄງການ) ໃນມູນຄ່າທີ່ໄດ້ຄໍ້າປະກັນການປະມູນ.
2. ຜູ້ແຂ່ງຂັນປະມູນຕ້ອງວາງເງິນຄໍ້າປະກັນການປະມູນຕໍ່າສຸດ 2% ຂອງມູນຄ່າທັງໝົດ ຫຼື ສາມາດປະກອບໜັງສືຄໍ້າປະກັນທີ່ອອກໂດຍ ທະນາຄານ ມາໃຫ້ ທຄຕລ ໃນມື້ທີ່ນໍາຊອງສະເໜີລາຄາມາຍື່ນ. ພາຍຫລັງປະກາດຜົນ ທຄຕລ ຈະສົ່ງເງິນຄໍ້າປະກັນດັ່ງກ່າວຄືນ.
3. ໜັງສືຄໍ້າປະກັນການປະມູນ ຕ້ອງມີອາຍຸຮອດວັນທີ 30/04/2020, ພາຍຫລັງປະກາດຜົນ ທຄຕລ ຈະສົ່ງເອກະສານຄືນ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ສຸພັກ ຖິ່ນໄຊພອນ